ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ

ເລກທີ..1234./ອຊ
ອຸດົມໄຊ, ວັນທີ .06..ທັນວາ 2022

# ຂໍ້ຕົກລົງ
## ວ່າດ້ວຍການຄຸ້ມຄອງການຈັດງານປະເພນີຕ່າງໆ ຢູ່ແຂວງອຸດົມໄຊ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບປັບປຸງ ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດທີ 4 ມາດຕາ 20 ວ່າດ້ວຍ ສິດ ແລະ ໜ້າທີ່ຂອງເຈົ້າແຂວງ;
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 12 ພະຈິກ 2021;
- ອີງຕາມ ດຳລັດວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍ ສະບັບເລກທີ 205/ລບ, ລົງວັນທີ 22 ກໍລະກົດ 2022;
- ອີງຕາມ ມະຕິກອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ວ່າດ້ວຍການຮັບຮອງເອົາຂໍ້ຕົກລົງຂອງທ່ານເຈົ້າແຂວງ ກ່ຽວກັບການຄຸ້ມຄອງການຈັດງານປະເພນີຕ່າງໆ ຢູ່ແຂວງອຸດົມໄຊ ສະບັບເລກທີ 763/ສພຂ.ອຊ, ລົງວັນທີ 10 ສິງຫາ 2022.

## ເຈົ້າແຂວງ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ມາດຕະການໃນການຄຸ້ມຄອງການຈັດງານປະເພນີຕ່າງໆ ຢູ່ແຂວງອຸດົມໄຊ ເພື່ອຮັບປະກັນທາງດ້ານຊັບສິນ, ຊີວິດ, ສຸຂະພາບ, ແນໃສ່ການປະຢັດຄ່າໃຊ້ຈ່າຍ, ຕ້ານການຟູມເຟືອຍ, ປົກປັກຮັກສາຮີດຄອງປະເພນີອັນດີງາມທີ່ເປັນມູນເຊື້ອຂອງຊາດ, ຂອງບັນດາເຜົ່າ ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຮັບປະກັນໃນການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ໃຫ້ມີຄວາມຍືນຍົງ.

**ມາດຕາ 2** ການຄຸ້ມຄອງການຈັດງານປະເພນີ

ແມ່ນການກຳນົດຮູບແບບ, ວິທີການ ແລະ ມາດຕະການໃນການຈັດງານປະເພດຕ່າງໆ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ, ຮັບປະກັນການປະຢັດຄ່າໃຊ້ຈ່າຍ ແລະ ຕ້ານການຟູມເຟືອຍ.

**ມາດຕາ 3 ການອະທິບາຍຄຳສັບ**

1. ງານແຕ່ງດອງ ໝາຍເຖິງ ພິທີການຢັ້ງຢືນໃນການສ້າງຄອບຄົວໃໝ່ ເພື່ອໃຫ້ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມຮັບຮູ້ວ່າ ຄູ່ບ່າວສາວໄດ້ຈົດທະບຽນສົມລົດເປັນຄູ່ຜົວເມຍກັນ ໂດຍຖືກຕ້ອງຕາມກົດໝາຍ ແລະ ຮີດຄອງປະເພນີຂອງລາວ;

2. ງານບາສີສູ່ຂວັນ ໝາຍເຖິງ ພິທີສູ່ຂວັນ, ຜູກແຂນ ແລະ ໃຫ້ພອນເຊິ່ງກັນ ແລະ ກັນ ທີ່ຈັດຂຶ້ນໂດຍບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ ເພື່ອຄວາມເປັນສິລິມຸງຄຸນ ແລະ ເປັນການຮັບໂຊກ ຮັບໄຊ;

3. ງານລ້ຽງ ໝາຍເຖິງ ງານທີ່ຈັດຂຶ້ນເພື່ອເປັນການພົບປະສັງສັນ, ຮັບປະທານອາຫານ, ກິນດື່ມເນື່ອງໃນໂອກາດວັນສຳຄັນຕ່າງໆ;

4. ງານບຸນປະເພນີ ໝາຍເຖິງ ງານເທດສະການ, ງານບຸນຮີດຄອງປະເພນີຕ່າງໆທີ່ເຄີຍນັບຖື ແລະປະຕິບັດສືບທອດຕໍ່ໆກັນມາ ຂອງປະຊາຊົນບັນດາເຜົ່າ;

5. ໝໍພອນ ໝາຍເຖິງ ຜູ້ທີ່ມີຄວາມຮູ້ທາງດ້ານສາສະໜາ, ຮູ້ພິທີກຳ, ຮູ້ຄຳໃຫ້ພອນແກ່ງານແຕ່ງດອງ, ຂຶ້ນເຮືອນໃໝ່, ງານອອກກຳແອນ້ອຍ, ງານປະເພນີ ແລະ ອື່ນໆ;

6. ການເສຍຊີວິດ ໝາຍເຖິງ ການສິ້ນລົມຫາຍໃຈ, ຍາດພີ່ນ້ອງ, ເພື່ອນມິດສະຫາຍ ແລະ ການຈັດຕັ້ງຈັດພິທີສົ່ງສະການ ອຸທິດໃຫ້ແກ່ຄົນຜູ້ທີ່ເສຍຊີວິດຕາມການເຊື່ອຖືຂອງແຕ່ລະເຜົ່າ ຕາມເງື່ອນໄຂຄວາມສາມາດຂອງຄອບຄົວ ແລະ ທຳບຸນໃຫ້ທານຕາມຮີດຄອງປະເພນີຂອງເຜົ່າ;

7. ການຄຸ້ມຄອງ ໝາຍເຖິງ ການກຳນົດລະບຽບການໃດໜຶ່ງ ເພື່ອຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບແນວທາງນະໂຍບາຍທີ່ວາງອອກ ເພື່ອຄວາມເປັນລະບຽບ, ຄວາມເປັນເອກະພາບ;

8. ຄ່າສິນສອດ ໝາຍເຖິງ ຄ່າແຕ່ງເຈົ້າສາວທີ່ພໍ່ແມ່ຝ່າຍຍິງຮຽກເອົາເປັນຈຳນວນເງິນ, ຄຳ ແລະ ຊັບສິນອື່ນໆ ເພື່ອຕອບແທນບຸນຄຸນ ຈາກຝ່າຍຊາຍທີ່ໄດ້ເອົາພໍ່ແມ່ຂອງຕົນມາສູ່ຂໍຝ່າຍຍິງຢ່າງຖືກຕ້ອງຕາມຮີດຄອງປະເພນີຂອງລາວ ແລະ ຂອງເຜົ່າຕ່າງໆ;

9. ຄ່າສິນແຕ່ງ ໝາຍເຖິງ ການລ້ຽງດູ, ຄ່ານ້ຳນົມແມ່, ຄ່າລຸງຕາ, ອ້າຍ, ເອື້ອຍ, ນ້ອງ ຕາມຮີດຄອງ ຂອງແຕ່ລະເຜົ່າ;

10. ຜູ້ບໍລິໂພກ ໝາຍເຖິງ ຜູ້ຊົມໃຊ້ ແລະ ຜູ້ໃຊ້ສອຍຕ່າງໆ;

11. ອຸປະໂພກ ໝາຍເຖິງ ເຄື່ອງໃຊ້ສອຍໃຫ້ເກີດປະໂຫຍດ;

12. ປຼາສະຕິກ ໝາຍເຖິງ ວັດຖຸທີ່ເປັນຢາງສາມາດບັນຈຸ ແລະ ຫຸ້ມຫໍ່ອາຫານໄດ້;

13. ປະຢັດມັດທະຍັດ ໝາຍເຖິງ ການນຳໃຊ້ງົບປະມານ ແລະ ຊັບສິນຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງລັດ, ການຈັດຕັ້ງສັງຄົມ ແລະ ອື່ນໆ ໃຫ້ມີປະສິດທິຜົນສູງສຸດ;

14. ຟູມເຟືອຍ ໝາຍເຖິງ ການນຳໃຊ້ງົບປະມານ ແລະ ຊັບສິນຂອງບຸກຄົນ, ການຈັດຕັ້ງລັດ, ການຈັດຕັ້ງສັງຄົມ, ເວລາທາງລັດຖະການ, ພະລັງງານອື່ນໆ ເກີນຄວາມຈຳເປັນ ແລະ ຖານະທາງເສດຖະກິດການເງິນບໍ່ສົມເຫດສົມຜົນ;

15. ເດຊີເບວ (Decibel) ໝາຍເຖິງ ຫົວໜ່ວຍວັດແທກຄວາມດັງຂອງສຽງ.

**ມາດຕາ 4 ນະໂຍບາຍຂອງແຂວງ**

ລັດຊຸກຍູ້, ສົ່ງເສີມໃຫ້ແກ່ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງລັດ ແລະ ອົງການຈັດຕັ້ງສັງຄົມ ທຸກພາກສ່ວນເປັນເຈົ້າການໃນການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງການຈັດງານປະເພນີຕ່າງໆ ໃຫ້ເຂົ້າສູ່ລະບຽບກົດໝາຍ.

**ມາດຕາ 5 ຫຼັກການ**

1. ຮັບປະກັນຄວາມຖືກຕ້ອງ, ສອດຄ່ອງກັບແນວທາງຂອງພັກ, ກົດໝາຍຂອງລັດ ແລະ ຮີດຄອງປະເພນີ ອັນດີງາມຂອງຊາດ, ຂອງທ້ອງຖິ່ນ ແລະ ຂອງບັນດາເຜົ່າ;

2. ຮັບປະກັນຄວາມໂປ່ງໃສ, ເປີດເຜີຍ, ມີການປະສານງານກັບບັນດາພາກສ່ວນກ່ຽວຂ້ອງ ໃນການຕິດຕາມ, ກວດກາ, ຮັບປະກັນການປະຢັດມັດທະຍັດ, ຕ້ານການຟູມເຟືອຍ ແລະ ປະກົດການຫຍໍ້ທໍ້ເກີດຂຶ້ນໃນສັງຄົມ;

3. ຮັບປະກັນຄວາມປອດໄພ ທາງດ້ານຊັບສິນ, ຊີວິດ, ສຸຂະພາບ, ດຳລົງຊີວິດປົກກະຕິແບບໃໝ່ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສິ່ງແວດລ້ອມ;

4. ຮັບປະກັນຄວາມສາມັກຄີ, ຄວາມເປັນເອກະພາບ ແລະ ສະເໝີພາບ ຂອງປະຊາຊົນບັນດາເຜົ່າພາຍໃນແຂວງອຸດົມໄຊ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມທຸກພາກສ່ວນ ທີ່ມີເປົ້າໝາຍຈັດງານປະເພນີຕ່າງໆ ທົ່ວແຂວງອຸດົມໄຊ.

## ໝວດທີ 2
## ການຈັດງານແຕ່ງດອງ

**ມາດຕາ 7 ການແຕ່ງດອງ**

ການແຕ່ງດອງ ຄົນລາວກັບຄົນລາວ, ຄົນລາວກັບຄົນຕ່າງປະເທດ ຢູ່ແຂວງອຸດົມໄຊ ຕ້ອງປະຕິບັດຕາມຮີດຄອງປະເພນີ, ລະບຽບການ, ມີການສູ່ຂໍຕາມຂັ້ນຕອນ, ມີບົດບັນທຶກຢັ້ງຢືນການສູ່ຂໍ ຈາກອົງການປົກຄອງບ້ານ ແລະ ໃບທະບຽນສົມລົດຈາກຫ້ອງການພາຍໃນເມືອງທີ່ຕົນເອງສັງກັດຢູ່, ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍທະບຽນຄອບຄົວ ສະບັບເລກທີ 44/ສພຊ, ລົງວັນທີ 14 ມິຖຸນາ 2018 ແລະ ຄຳແນະນຳຂອງກະຊວງພາຍໃນເລກທີ 02/ພນ, ລົງວັນທີ 28 ມັງກອນ 2019 ຢ່າງເຂັ້ມງວດ.

**ມາດຕາ 8 ການອອກບັດເຊີນ ແລະ ໃສ່ເງິນບັດເຊີນ**

ການອອກບັດເຊີນງານດອງ ແມ່ນໃຫ້ອີງໃສ່ເງື່ອນໄຂຂອງເຈົ້າພາບ, ການໃສ່ເງິນບັດເຊີນ ແມ່ນສຸດແລ້ວແຕ່ເງື່ອນໄຂຄວາມເພິ່ງພໍໃຈຂອງຜູ້ຖືກເຊີນ, ຍົກເວັ້ນຍາດພີ່ນ້ອງ ແລະ ໝູ່ຄູ່ສະໜິດຈະຊ່ວຍຄອບຄົວໃໝ່ ສຸດແລ້ວແຕ່ຄວາມສາມາດ, ຂະໜາດບັດເຊີນບໍ່ໃຫ້ເກີນ 15 ຊັງຕີແມັດ x 20 ຊັງຕີແມັດ ລົງມາ.

**ມາດຕາ 9 ການເກັບເງິນຄ່າທຳນຽມບ້ານຈາກຄູ່ສົມລົດໃໝ່**

ການເກັບເງິນຄ່າທຳນຽມບ້ານຈາກຄູ່ສົມລົດໃໝ່ ແມ່ນໃຫ້ປະຕິບັດ ເປັນເອກະພາບກັນຄື ຄົນພາຍໃນບ້ານ, ຕ່າງບ້ານ, ຕ່າງເມືອງ, ຄົນຕ່າງແຂວງ ແລະ ຄົນຕ່າງປະເທດ ແມ່ນໃຫ້ປະຕິບັດຕາມລັດຖະບັນຍັດ ຂອງປະທານປະເທດ ເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 10 ຄ່າສິນສອດ ແລະ ຄ່າສິນແຕ່ງ**

ຄ່າສິນສອດ ແລະ ຄ່າສິນແຕ່ງ (ຄ່າດອງ) ແມ່ນໃຫ້ທັງສອງຝ່າຍ ປຶກສາຫາລືຕົກລົງເປັນເອກະພາບກັນ ແລະ ປະຕິບັດຕາມຮີດຄອງປະເພນີຂອງແຕ່ລະເຜົ່າ, ກົດລະບຽບຂອງບ້ານ ຕາມເງື່ອນໄຂຄວາມສາມາດຂອງຄອບຄົວ ທີ່ບໍ່ຂັດກັບກົດໝາຍ ແລະ ລະບຽບການ.

**ມາດຕາ 11 ການເກັບເງິນຄ່າທຳນຽມເຂົ້າບ້ານຈາກການຢ່າຮ້າງຂອງຄູ່ຜົວເມຍ**

ການເກັບເງິນຄ່າທຳນຽມເຂົ້າບ້ານຈາກການຢ່າຮ້າງຂອງຄູ່ຜົວເມຍ ແມ່ນໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 12 ການແຫ່ເຂີຍ, ແຫ່ໃພ້**

ການແຫ່ເຂີຍ, ແຫ່ໃພ້ ໃຫ້ຈັດແບບງ່າຍດາຍ, ກະທັດຮັດ, ມ່ວນຊື່ນຕາມຮີດຄອງປະເພນີຂອງເຜົ່າດ້ວຍການເສບດົນຕີພື້ນເມືອງ, ເປີດເພງລາວ ຫຼື ຮ້ອງເພງລາວ ໃຫ້ແຫ່ດ້ວຍການຍ່າງ, ໃຊ້ພາຫະນະຕາມຄວາມເໝາະສົມ ບໍ່ໃຫ້ສ້າງຄວາມຫຍຸ້ງຍາກ, ກີດຂວາງການສັນຈອນຕາມທ້ອງຖະໜົນ ແລະ ເປີດເຄື່ອງສຽງເນື່ອງນັນລົບກວນສັງຄົມ.

**ມາດຕາ 13 ການສູ່ຂວັນຄູ່ສົມລົດໃໝ່**

ການສູ່ຂວັນຄູ່ສົມລົດໃໝ່ ໃຫ້ປະຕິບັດຕາມຮີດຄອງປະເພນີອັນດີງາມຂອງແຕ່ລະເຜົ່າ ທີ່ເຄີຍປະຕິບັດສືບທອດກັນມາ, ຈະຈັດຢູ່ເຮືອນຂອງເຈົ້າພາບຝ່າຍຍິງ, ຝ່າຍຊາຍ ຫຼື ສະຖານທີ່ອື່ນໆກໍໄດ້ ຕາມເງື່ອນໄຂ

ຄວາມສະດວກຂອງຄອບຄົວສອງຝ່າຍ, ການປະດັບປະດາຕົບແຕ່ງ ແມ່ນບໍ່ໃຫ້ເກີນຄວາມຈຳເປັນ ແລະ ຖານະທາງເສດຖະກິດການເງິນ, ບໍ່ຫຼູຫຼາເກີນໄປ.

**ມາດຕາ 14 ສະຖານທີ່ ແລະ ພາເຂົ້າໃນງານແຕ່ງດອງ**

ສະຖານທີ່ຈັດງານແຕ່ງດອງ ຈະຈັດຂຶ້ນຢູ່ເຮືອນຂອງເຈົ້າພາບຝ່າຍໃດໜຶ່ງ ຫຼື ສະຖານທີ່ອື່ນກໍ່ໄດ້ ແລ້ວແຕ່ຄວາມສະດວກ, ໃຫ້ພຽງພໍໃນການຮອງຮັບແຂກທີ່ເຊີນມາຮ່ວມງານ, ຈັດໃຫ້ມີໄລຍະຫ່າງ ບໍ່ໃຫ້ແອອັດ.

ພາເຂົ້າໃນງານແຕ່ງດອງ ຈະຈັດເປັນພາເຂົ້າ ຫຼື ເປັນໂຕະອາຫານຕາມຄວາມເໝາະສົມ, ສ່ວນອາຫານອາດຈະປະກອບມີຫຼາຍປະເພດ ຕາມເງື່ອນໄຂຂອງເຈົ້າພາບ ແຕ່ຕ້ອງຮັບປະກັນໃຫ້ຖືກຕາມຫຼັກອະນາໄມ ປອດໄພຕໍ່ຊີວິດ, ສຸຂະພາບຂອງຜູ້ບໍລິໂພກ, ອາຫານຕ້ອງພຽງພໍ ແລະ ໃຫ້ຫຸ້ມຫໍ່, ບັນຈຸດ້ວຍວັດຖຸທຳມະຊາດ ຫຼື ວັດຖຸອື່ນໆທີ່ບໍ່ສົ່ງຜົນກະທົບຕໍ່ຜູ້ບໍລິໂພກ.

**ມາດຕາ 15 ພິທີການຮັບແຂກໃນງານແຕ່ງດອງ**

ພິທີການຮັບແຂກໃນງານແຕ່ງດອງ ເຈົ້າພາບທີ່ມາຢືນຕ້ອນຮັບແຂກເຂົ້າຮ່ວມງານນຳໜ້າໂດຍພໍ່ແມ່ຝ່າຍຍິງ, ພໍ່ແມ່ຝ່າຍຊາຍ ແລະ ເຈົ້າພາບຈຳນວນໜຶ່ງຕາມຄວາມເໝາະສົມ, ທັກທາຍ ແລະ ຕ້ອນຮັບແຂກດ້ວຍການຍໍມືນົບສະແດງຄວາມເຄົາລົບ, ໃຫ້ກຽດເຊິ່ງກັນ ແລະ ກັນຕາມຮີດຄອງປະເພນີຂອງລາວ.

ງານຕອນສວາຍ ໃຫ້ຕ້ອນຮັບແຂກເຂົ້າງານ ເວລາ 11:00 ໂມງ-12:00 ໂມງ ຕາງໜ້າເຈົ້າພາບສອງຝ່າຍຂຶ້ນສູ່ເວທີກ່າວຕ້ອນຮັບ, ເຊີນແຂກຮັບປະທານອາຫານທ່ຽງ ແລະ ມ່ວນຊື່ນ.

ງານຕອນຄ່ຳ ໃຫ້ຕ້ອນຮັບແຂກເຂົ້າງານ ເວລາ 18:00 ໂມງ-19:00 ໂມງ ຕາງໜ້າເຈົ້າພາບສອງຝ່າຍຂຶ້ນສູ່ເວທີກ່າວຕ້ອນຮັບ, ເຊີນແຂກຮັບປະທານອາຫານຄ່ຳ ແລະ ມ່ວນຊື່ນ.

ການກ່າວຕ້ອນຮັບໃຫ້ກະທັດຮັດ, ມີເນື້ອໃນເປັນສິລິມຸງຄຸນແກ່ຄູ່ສ້າງຄອບຄົວໃໝ່ ແລະ ແຂກທີ່ມາຮ່ວມໃນງານ.

**ມາດຕາ 16 ການນຸ່ງຖືໃນງານແຕ່ງດອງ**

ການນຸ່ງຖືໃນງານແຕ່ງດອງ ຂອງເຈົ້າພາບ, ເຈົ້າບ່າວ, ເຈົ້າສາວ ແລະ ແຂກຖືກເຊີນທີ່ມາຮ່ວມໃນງານແຕ່ງດອງ ເພດຍິງ, ນຸ່ງສິ້ນ, ເສື້ອສຸພາບ ແລະ ເພດຊາຍນຸ່ງໂສ້ງຂາຍາວ, ເສື້ອສຸພາບ, ຊຸດສາກົນ ຫຼື ຈະນຸ່ງຊຸດຊົນເຜົ່າ ຕາມເອກະລັກວັດທະນະທຳຂອງເຜົ່າຕົນເອງກໍໄດ້ ຫຼື ນຸ່ງຖືຕາມຄວາມສາມາດຂອງຜູ້ຈັດງານ.

**ມາດຕາ 17 ການມ່ວນຊື່ນໃນງານແຕ່ງດອງ**

ການມ່ວນຊື່ນໃນງານແຕ່ງດອງ ໃຫ້ຖືກຕ້ອງຕາມຮີດຄອງວັດທະນະທຳລາວ, ການຮ້ອງເພງ, ການຂັບລຳ, ການເສບດົນຕີ, ການເປີດເພງ ແມ່ນໃຫ້ເປີດເພງລາວ, ການຂັບລຳ, ຮ້ອງເພງລາວ ຫຼື ເພງເຜົ່າ ທີ່ມີເນື້ອໃນເປັນສິລິມຸງຄຸນໃຫ້ແກ່ຄູ່ສ້າງຄອບຄົວໃໝ່.

ການມ່ວນຊື່ນຕອນສວາຍ ບໍ່ໃຫ້ກາຍເວລາ 16 ໂມງ ແລະ ການມ່ວນຊື່ນຕອນຄ່ຳ ບໍ່ໃຫ້ກາຍເວລາ 23 ໂມງ 30 ນາທີ.

## ໝວດທີ 3
## ການຈັດງານບາສີສູ່ຂວັນ

**ມາດຕາ 18 ພາຂວັນງານບາສີສູ່ຂວັນ**

ພາຂວັນງານບາສີສູ່ຂວັນ ໃຫ້ປະຕິບັດຕາມຮີດຄອງປະເພນີອັນດີງາມຂອງແຕ່ລະເຜົ່າ, ຕາມປະເພນີຂອງເຜົ່າ, ບົນພື້ນຖານການປະຢັດການໃຊ້ຈ່າຍ ເໝາະສົມກັບງານດັ່ງກ່າວ.

**ມາດຕາ 19 ການໃສ່ບັດເຊີນງານສູ່ຂວັນ**

ການໃສ່ເງິນບັດເຊີນງານສູ່ຂວັນ, ອອກກຳແອນ້ອຍ ແລະ ງານອື່ນໆ ແມ່ນໃຫ້ອີງໃສ່ເງື່ອນໄຂຄວາມສາມາດຂອງຜູ້ຖືກເຊີນ, ສຳລັບຍາດຕິພີ່ນ້ອງ ແລະ ເພື່ອນສະໜິດຂອງຜູ້ຈັດງານ ແມ່ນສຸດແລ້ວແຕ່ຄວາມສາມາດຈະປະກອບສ່ວນ, ຂະໜາດບັດເຊີນໃຫຍ່ສຸດບໍ່ໃຫ້ເກີນ 11 ຊັງຕີແມັດ x 16 ຊັງຕີແມັດ.

**ມາດຕາ 20 ສະຖານທີ່ຈັດງານບາສີສູ່ຂວັນ**

ສະຖານທີ່ຈັດງານບາສີສູ່ຂວັນ ອາດຈະຈັດຢູ່ໃນເຮືອນຂອງບຸກຄົນ ຫຼື ສະຖານທີ່ອື່ນໆ ຕາມຈຸດປະສົງຂອງເຈົ້າພາບ, ສະຖານທີ່ຕ້ອງໃຫ້ພຽງພໍ ໃນການຮອງຮັບແຂກທີ່ເຊີນມາຮ່ວມງານ, ຈັດໃຫ້ມີໄລຍະຫ່າງ ບໍ່ໃຫ້ແອອັດ, ໃຫ້ຫຼີກລ້ຽງການຈັດງານໃສ່ຖະໜົນຫົນທາງ ເພາະຈະສ້າງຄວາມຫຍຸ້ງຍາກໃນການສັນຈອນຂອງຜູ້ຊົມໃຊ້ຖະໜົນ.

**ມາດຕາ 21 ໝໍພອນ**

ໝໍພອນ ຕ້ອງແຕ່ງກາຍສຸພາບຮຽບຮ້ອຍເໝາະສົມກັບແຕ່ລະງານ, ການສູດໃຫ້ຖືກຕ້ອງຕາມເນື້ອໃນຂອງງານ ແລະ ບໍ່ໃຫ້ຍາວເກີນໄປ.

**ມາດຕາ 22 ການມ່ວນຊື່ນໃນງານບາສີສູ່ຂວັນ**

ການມ່ວນຊື່ນໃນການບາສີສູ່ຂວັນ ຈະມີການມ່ວນຊື່ນ ຫຼື ບໍ່ມີການມ່ວນຊື່ນກໍໄດ້ ໃນກໍລະນີມີການມ່ວນຊື່ນ ແມ່ນໃຫ້ປະຕິບັດຕາມຮີດຄອງວັດທະນະທຳລາວ ແລະ ຕາມມາດຕາ 17 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 4
## ການຈັດງານລ້ຽງ

**ມາດຕາ 23 ສະຖານທີ່ຈັດງານລ້ຽງ**

ສະຖານທີ່ຈັດງານລ້ຽງ ຈະຈັດຢູ່ເຮືອນບຸກຄົນ, ສຳນັກງານອົງການ ຫຼື ຢູ່ຮ້ານອາຫານ, ພັດຕະຄານ ຫຼື ໂຮງແຮມຕ່າງໆ ຕາມຄວາມສາມາດຂອງເຈົ້າພາບຈັດງານ ແຕ່ສະຖານທີ່ຕ້ອງສະດວກ, ຈັດໃຫ້ມີໄລຍະຫ່າງ ບໍ່ໃຫ້ແອອັດ, ໃຫ້ຫຼີກລ້ຽງການຈັດງານໃສ່ຖະໜົນຫົນທາງ ເພາະຈະສ້າງຄວາມຫຍຸ້ງຍາກໃນການສັນຈອນຂອງຜູ້ຊົມໃຊ້ຖະໜົນ.

ການຕົບແຕ່ງປະດັບປະດາໃນງານໃຫ້ແບບລຽບງ່າຍ, ຖືກຕາມຈຸດປະສົງພິທີການຂອງງານ, ບໍ່ໃຫ້ຟຸມເຟືອຍ ແລະ ສິ້ນເປືອງງົບປະມານ.

**ມາດຕາ 24 ການມ່ວນຊື່ນໃນງານລ້ຽງ**

ໃນງານລ້ຽງຈະມີການມ່ວນຊື່ນ ຫຼື ບໍ່ມ່ວນຊື່ນກໍໄດ້ ໃນກໍລະນີຫາກມີການມ່ວນຊື່ນ ຕ້ອງໃຫ້ຖືກຕ້ອງຕາມວັດທະນະທຳລາວ ການຮ້ອງເພງ, ຂັບລຳ, ຫຼິ້ນດົນຕີ, ເປີດເພງ ຕ້ອງເປັນບົດເພງລາວ ຫຼື ເພງເຜົ່າ.

ໃນກໍລະນີເປັນງານລ້ຽງ ຕ້ອນຮັບແຂກຕ່າງປະເທດ ການມ່ວນຊື່ນຮ້ອງເພງ, ເສບດົນຕີພື້ນເມືອງ, ເສບດົນຕີສາກົນ, ແມ່ນອະນຸຍາດໃຫ້ເປີດເພງສາກົນໄດ້.

## ໝວດທີ 5
## ບຸນປະເພນີ

**ມາດຕາ 25 ການກະກຽມ ແລະ ສະຖານທີ່ຈັດງານບຸນປະເພນີ**

ການກະກຽມ ງານບຸນປະເພນີຕ່າງໆອົງການປົກຄອງບ້ານແຕ່ລະຂັ້ນ, ປະຊາຊົນບັນດາເຜົ່າພາຍໃນແຂວງ, ເມືອງ ຕ້ອງມີຄວາມເປັນເອກະພາບ ແລະ ມີການແຕ່ງຕັ້ງຄະນະຮັບຜິດຊອບ, ປະສານສົມທົບຢ່າງກົມກຽວກັບບັນດາອົງການທີ່ກ່ຽວຂ້ອງ ໂດຍແມ່ນອົງການປົກຄອງບ້ານ ແລະ ເຖົ້າແກ່ຜູ້ຊົງຄຸນວຸດທິເປັນເຈົ້າການ.

ຕ້ອງສ້າງແຜນກິດຈະກຳຕ່າງໆ ເພື່ອສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ ແລະ ຂັ້ນເມືອງອະນຸມັດ, ແລ້ວຈຶ່ງສາມາດຈັດງານດັ່ງກ່າວໄດ້.

ການຈັດງານບຸນປະເພນີຂອງບຸກຄົນ, ຄອບຄົວ ຜູ້ຈັດງານບຸນປະເພນີນັ້ນ ຕ້ອງໄດ້ກະກຽມຄວາມພ້ອມໃນດ້ານຕ່າງໆໃຫ້ຄົບຖ້ວນ, ຖືກຕ້ອງຕາມປະເພນີ ແລະ ຕ້ອງແຈ້ງໃຫ້ອົງການປົກຄອງບ້ານ ຫຼື ພາກສ່ວນທີ່ກ່ຽວຂ້ອງຮັບຮູ້, ການເຮັດບັດເລົ່າບຸນຕ້ອງລະບຸຊື່, ທີ່ຢູ່ຂອງຜູ້ຖືກເຊີນ ເພື່ອໃຫ້ກຽດແຂກທີ່ມາຮ່ວມງານ.

ສະຖານທີ່ຈັດງານ ບຸນປະເພນີຕ່າງໆ ຈະຈັດຢູ່ ເຮືອນ, ວັດ, ສະໂມສອນ, ເດີ່ນສາທາລະນະ, ສໍານັກງານ, ອົງການ ແລະ ສະຖານທີ່ອື່ນໆ ຕາມຄວາມສາມາດຂອງຜູ້ຈັດງານ; ແຕ່ຕ້ອງຮັບປະກັນຄວາມສະຫງົບປອດໄພ, ສະຖານທີ່ກວ້າງຂວາງ ແລະ ບໍ່ໃຫ້ແອອັດ.

**ມາດຕາ 26 ພິທີການ ແລະ ການສະຫຼອງບຸນປະເພນີຕ່າງໆ**

ພິທີການຈັດງານບຸນປະເພນີໃຫ້ຖືກຕ້ອງສອດຄ່ອງກັບຮີດຄອງປະເພນີອັນດີງາມຂອງລາວ, ຂອງເຜົ່າ, ບໍ່ເຊື່ອຖືງົມງວາຍ, ລາມົກ ທີ່ບໍ່ສອດຄ່ອງກັບວັດທະນະທໍາລາວຂັດກັບກົດໝາຍ ແລະ ລະບຽບການຂອງລັດ.

ການສະຫຼອງບຸນປະເພນີຕ່າງໆ ຂອງຊົນເຜົ່າບໍ່ໃຫ້ກາຍ 3 ວັນ, ຕ້ອງສະຫຼອງດ້ວຍຄວາມເບີກບານມ່ວນຊື່ນ ແລະ ຖືກຕ້ອງຕາມຮີດຄອງປະເພນີຂອງເຜົ່າຕ່າງໆ, ສໍາລັບບຸນປະເພນີຊົນເຜົ່າ ທີ່ມີການຈູດບັ້ງໄຟທາງ, ບັ້ງໄຟດອກ, ໝາກກະໂພກ ແລະ ສິ່ງທີ່ມີສຽງດັງເນື່ອງມັນລົບກວນສັງຄົມ ໃຫ້ສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງຕາມລະບຽບການ, ຂັ້ນຕອນ ແລະ ໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ກ່ຽວຂ້ອງສາກ່ອນ.

**ມາດຕາ 27 ອາຫານ ແລະ ພາເຂົ້າງານບຸນປະເພນີ, ງານລ້ຽງ, ງານບາສີສູ່ຂວັນ**

ອາຫານ ສາມາດປຸງແຕ່ງໄດ້ຫຼາຍປະເພດຕາມຈຸດປະສົງຂອງຜູ້ຈັດງານ ແຕ່ຕ້ອງຮັບປະກັນຫຼັກອະນາໄມຄວາມປອດໄພຕໍ່ຊີວິດ, ສຸຂະພາບຂອງຜູ້ບໍລິໂພກ, ອາຫານ ຈະຫຸ້ມຫໍ່ດ້ວຍວັດຖຸທໍາມະຊາດ ຫຼື ວັດຖຸອື່ນທີ່ບໍ່ສົ່ງຜົນກະທົບຕໍ່ສຸຂະພາບຜູ້ບໍລິໂພກ.

ໃນກໍລະນີເປັນງານລ້ຽງຕ້ອນຮັບແຂກຂັ້ນສູງ ຫຼື ແຂກຕ່າງປະເທດ ກໍານົດ ແລະ ປຸງແຕ່ງອາຫານໃຫ້ເໝາະສົມກັບງານ ແລະ ແຂກທີ່ເຂົ້າມາຮ່ວມ.

ພາເຂົ້າງານບຸນປະເພນີ, ງານລ້ຽງ, ງານບາສີສູ່ຂ້ວນ ຈະຈັດເປັນພາ ຫຼື ເປັນໂຕະອາຫານ ຕາມຄວາມເໝາະສົມຂອງງານລ້ຽງ, ຕ້ອງມີການເວັ້ນໄລຍະຫ່າງ ແລະ ບໍ່ໃຫ້ແອອັດ.

**ມາດຕາ 28 ການນຸ່ງຖືໃນງານບຸນປະເພນີ, ງານສູ່ຂວັນ ແລະ ງານລ້ຽງ**

ການນຸ່ງຖືໃນງານບຸນປະເພນີ, ງານສູ່ຂວັນ, ງານລ້ຽງ, ເຈົ້າພາບ ແລະ ແຂກຖືກເຊີນມາຮ່ວມໃນງານບຸນປະເພນີຕ່າງໆ ຕ້ອງແຕ່ງກາຍໃຫ້ສຸພາບຮຽບຮ້ອຍຕາມວັດທະນະທໍາການນຸ່ງຖືຂອງລາວ ເຊັ່ນ: ເພດຍິງນຸ່ງສິ້ນ, ເສື້ອສຸພາບ ແລະ ເພດຊາຍນຸ່ງໂສ້ງຂາຍາວ, ເສື້ອສຸພາບ, ຊຸດສາກົນ ຫຼື ຈະນຸ່ງຊຸດຊົນເຜົ່າ ຕາມເອກະລັກວັດທະນະທໍາຂອງເຜົ່າຕົນກໍ່ໄດ້; ງານບຸນປະເພນີເຜົ່າໃດໃຫ້ນຸ່ງຊຸດຊົນເຜົ່ານັ້ນ.

**ມາດຕາ 29 ການຂຽນປ້າຍ, ຄໍາຂວັນ, ບັດເຊີນ ງານແຕ່ງດອງ, ງານສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ**

ການຂຽນປ້າຍ, ຄໍາຂວັນ, ບັດເຊີນງານແຕ່ງດອງ, ງານສູ່ຂວັນ, ງານລ້ຽງ, ບຸນປະເພນີຕ່າງໆ ໃຫ້ຂຽນເປັນພາສາລາວ ຖ້າຂຽນທັງພາສາລາວ ແລະ ພາສາຕ່າງປະເທດ, ພາສາຕ່າງປະເທດ ໃຫ້ຂຽນຢູ່ກ້ອງພາສາລາວ, ຕົວໜັງສືລາວ ຕ້ອງໃຫຍ່ກວ່າໜັງສືຕ່າງປະເທດ 2 ສ່ວນ 3 ຂອງຂະໜາດຕົວໜັງສືທັງໝົດ (ຍົກເວັ້ນປ້າຍງານທາງການ ຕ້ອນຮັບແຂກຕ່າງປະເທດ ທີ່ມີການອອກແບບສະເພາະ).

**ມາດຕາ 30 ການມ່ວນຊື່ນໃນງານບຸນປະເພນີ, ບຸນກິນທານ**

ການມ່ວນຊື່ນໃນງານບຸນປະເພນີ, ບຸນກິນທານ ການຈັດງານບຸນປະເພນີຕ່າງໆ ຕ້ອງປະຕິບັດຕາມຮີດຄອງປະເພນີວັດ ທະນະທໍາລາວໃນການຂັບ, ການລໍາ, ຮ້ອງເພງ, ການຫຼິ້ນດົນຕີພື້ນເມືອງຕ່າງໆ, ຕ້ອງເປັນບົດເພງລາວ, ສຽງຂັບ, ສຽງລໍາລາວບັນດາເຜົ່າ, ສ່ວນການມ່ວນຊື່ນຄຶກຄື້ນໃນງານບຸນກິນທານ ແມ່ນບໍ່ໃຫ້ກາຍ 24 ໂມງ 00 ນາທີ ແລະ ບໍ່ໃຫ້ແກ່ຍາວເວລາເກີນ 3 ວັນ.

## ໝວດທີ 6
## ງານສົບ

**ມາດຕາ 31 ແຈ້ງການເສຍຊີວິດ**

ເມື່ອມີຄົນເສຍຊີວິດຢູ່ໃນຄອບຄົວໃດໜຶ່ງ ຕ້ອງແຈ້ງໃຫ້ອົງການປົກຄອງບ້ານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງໄດ້ຮັບຮູ້.

**ມາດຕາ 32 ຄວາມຮັບຜິດຊອບໃນການຈັດງານສົບ.**

ຄວາມຮັບຜິດຊອບໃນການຈັດງານສົບຕ້ອງປະຕິບັດດັ່ງນີ້:

1. ຄອບຄົວຂອງຜູ້ທີ່ເສຍຊີວິດ ຈະຈັດງານສົບຢູ່ເຮືອນ, ສະໂມສອນ, ວັດ ຫຼື ສະຖານທີ່ໃດໜຶ່ງກໍໄດ້ຕາມເງື່ອນໄຂທີ່ເໝາະສົມ ແລະ ຕາມການອະນຸຍາດຂອງອົງການປົກຄອງບ້ານ;

2. ກໍລະນີງານສົບ ມີການແຕ່ງຕັ້ງຄະນະຮັບຜິດຊອບຈັດງານສົບເປັນທາງການ, ຄະນະຮັບຜິດຊອບການຈັດງານສົບ ມີໜ້າທີ່ສົມທົບກັບຄອບຄົວຂອງຜູ້ທີ່ເສຍຊີວິດ ແລະ ອົງການປົກຄອງບ້ານ ປຶກສາຫາລື ການຈັດງານຊາປະນະກິດສົບຕາມເງື່ອນໄຂຕົວຈິງ;

3. ກໍລະນີຜູ້ເສຍຊີວິດ ບໍ່ມີຍາດພີ່ນ້ອງ ແມ່ນອົງການປົກຄອງບ້ານ ປະສານສົມທົບກັບເຈົ້າໜ້າທີ່ຕຳຫຼວດເມືອງ ແລະ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ເປັນເຈົ້າການໃນການນຳເອົາສາກສົບໄປສົ່ງສະການຕາມສະຖານທີ່ເໝາະສົມ.

**ມາດຕາ 33 ການຈັດງານສົບ**

**ກ. ງານສົບຈະຈັດຢູ່ເຮືອນ ຫຼື ສະຖານທີ່ອື່ນໆກໍໄດ້ ຕ້ອງປະຕິບັດດັ່ງນີ້:**

1. ການຈັດງານສົບຕ້ອງສອດຄ່ອງຕາມປະເພນີ ອັນດີງາມ ແລະ ຕາມເງື່ອນໄຂຄວາມເປັນຈິງ ຂອງຄອບຄົວ, ອົງການຈັດຕັ້ງຜູ້ເສຍຊີວິດ;

2. ອົງການປົກຄອງບ້ານ, ການຈັດຕັ້ງທີ່ກ່ຽວຂ້ອງມີຄວາມຮັບຜິດຊອບ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້, ປຸກລະດົມຄອບຄົວຂອງຜູ້ທີ່ເສຍຊີວິດລຶບລ້າງບາງປະເພນີທີ່ຫຼ້າຫຼັງ, ເຊື່ອຖືງົມງາຍໃນງານສົບ;

3. ສົບຜູ້ເສຍຊີວິດຕ້ອງຫຸ້ມຫໍ່ປົກປິດ, ໃສ່ໂລງ, ຮັບປະກັນຄວາມສະອາດ, ສິ່ງແວດລ້ອມອ້ອມຂ້າງ, ສົບຂອງຜູ້ທີ່ເສຍຊີວິດບໍ່ໃຫ້ເອົາໄວ້ເຮືອນດົນ;

4. ເວລາອົບອຸ່ນງານສົບຕ້ອງຮັກສາໄລຍະຫ່າງ, ການບໍລິການອາຫານເຄື່ອງດື່ມຕ້ອງໃຫ້ມີຄວາມສະອາດ, ປອດໄພຕໍ່ສຸຂະພາບ, ຖືກຫຼັກອະນາໄມ, ເຄື່ອງບັນຈຸອາຫານປາສະຈາກສິ່ງທີ່ມີສານເຄມີ.

**ຂ. ການສົ່ງສະການ ຊຸກຍູ້ໃຫ້ປະຕິບັດຄືດັ່ງນີ້:**

1. ເວລາສົ່ງສະການ ບໍ່ໃຫ້ຍາດພີ່ນ້ອງຜູ້ເສຍຊີວິດຮ້ອງໄຫ້, ດຶງຈ່ອງໂລງສົບຂອງຜູ້ເສຍຊີວິດ ຈົນເຮັດໃຫ້ສຸຂະພາບຕົນອ່ອນເພຍ, ຊຸດໂຊມ;

2. ປະຕິບັດການຈູດ, ການຝັງຕາມຄວາມເຊື່ອຖືຂອງຊົນເຜົ່າ ຮັບປະກັນດ້ານສິ່ງແວດລ້ອມອ້ອມຂ້າງ;

3. ໃຫ້ແຕ່ລະບ້ານກຳນົດຂອບເຂດ ປ່າຊ້າ ຫຼື ເຕົາຫຼໍ່ເຜົາສົບ ແລະ ບ່ອນຝັງສົບ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 34 ສຳລັບງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ ໃຫ້ປະຕິບັດດັ່ງນີ້:**

1. ຈັດງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ ໃຫຍ່ເກີນໄປ, ແກ່ຍາວເວລາຫຼາຍວັນ, ຟູມເຟືອຍ ແລະ ສ້າງຄວາມສັບສົນໃນສັງຄົມ, ມີຈຸດປະສົງເປັນການຫາລາຍໄດ້, ອວດອ້າງຖານະຕຳແໜ່ງ ແລະ ອິດທິພົນທາງສັງຄົມ;

2. ໃຊ້ຖະໜົນຫົນທາງ ເປັນສະຖານທີ່ຈັດງານ ເພື່ອຮັບປະກັນຄວາມປອດໄພໃນການຈະລາຈອນ;

3. ຂຽນປ້າຍຄຳຂວັນງານດອງ, ບັດເຊີນ, ບັດເລົ່າບຸນ, ປ້າຍງານລ້ຽງ, ປ້າຍບຸນປະເພນີ ທີ່ເປັນພາສາຕ່າງປະເທດ ໂດຍບໍ່ມີພາສາລາວ;

4. ນຳໃຊ້ວັດຖຸອຸປະກອນ ທີ່ສົ່ງຜົນກະທົບຕໍ່ຊີວິດ, ສຸຂະພາບຂອງຜູ້ບໍລິໂພກ ມາປຸງແຕ່ງອາຫານ ແລະ ບັນຈຸຫຸ້ມຫໍ່ອາຫານດ້ວຍຟອງສະໂນ, ຢາງປຼາສຕິກ ແລະ ອື່ນໆ ທີ່ເປັນອັນຕະລາຍຕໍ່ສຸຂະພາບ;

5. ບຸກຄົນ, ນິຕິບຸກຄົນ ແລະ ບັນດາອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ ຮ້ອງເພງ, ຂັບລຳເປີດເພງທີ່ມີເນື້ອໃນບໍ່ສຸພາບ, ສຽດສີ ແລະ ໂຄສະນາບິດເບືອນຕໍ່ແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ ແລະ ເປີດເຄື່ອງສຽງດັງເກີນຂອບເຂດ ຫຼື ດັງແຮງເກີນກວ່າ 85 ເດຊິເບວ;

6. ການມ່ວນຊື່ນຢູ່ໃນງານຕ່າງໆ ແມ່ນໃຫ້ປະຕິບັດຕາມມາດຕາ 17, 22, 24, 30 ຂອງຂໍ້ຕົກລົງສະບັບນີ້;

7. ໂຄສົກເວົ້າບໍ່ສຸພາບ, ບໍ່ເປັນມຸງຄຸນ, ໂຄສະນາບິດເບືອນຄວາມຈິງ ທີ່ແຕະຕ້ອງກຽດສັກສີຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພັກ-ລັດ, ຊວນເຊື່ອສິ່ງທີ່ງົມງວາຍ, ສ້າງຄວາມເຊື່ອມເສຍຕໍ່ວັດທະນະທຳ-ຮີດຄອງປະເພນີອັນດີງາມຂອງຊາດ ແລະ ຂອງເຜົ່າ; ບໍ່ໃຫ້ເຈົ້າບ່າວ, ເຈົ້າສາວກອດຈູບກັນຢູ່ເວທີ;

8. ບຸກຄົນ, ນິຕິບຸກຄົນ ປະພຶດ, ແຈກໃບປິວ, ສະຕິກເກີ, ຮູບພາບ, ສິ່ງພິມ ທີ່ລາມົກອານາຈານ, ໃສ່ຮ້າຍປ້າຍສີການຈັດຕັ້ງພັກ-ລັດ ແລະ ອົງການຈັດຕັ້ງສັງຄົມ;

9. ໃຊ້ຈອກ, ຖ້ວຍ, ບ່ວງ, ໄມ້ຖູ່ ຮ່ວມກັນ ໃນການຮັບແຂກ ແລະ ອວຍພອນແຂກ ເພື່ອຫຼີກລ້ຽງພະຍາດຕິດແປດຕ່າງໆ;

10. ທັກທາຍ, ຕ້ອນຮັບແຂກເຂົ້າງານດ້ວຍການຈັບມື, ເກາະແຂນ ແລະ ກອດຄໍກັນດື່ມເຫຼົ້າ-ເບຍ;

11. ນຸ່ງຖືບໍ່ສຸພາບ, ບໍ່ເໝາະສົມຕາມວັດທະນະທຳອັນດີງາມຂອງລາວ, ຂອງເຜົ່າ ຍົກເວັ້ນແຂກຕ່າງປະເທດ, ຫ້າມເຈົ້າພາບງານແຕ່ງດອງ ກຳນົດຕັດເຄື່ອງນຸ່ງ ແມ່ນບໍ່ໃຫ້ບັງຄັບຜູ້ທີ່ເປັນເຈົ້າພາບຮ່ວມຕັດຊຸດເອງ;

12. ເອ້ຍ້ອງ, ປະດັບວັດຖຸເງິນ-ຄຳ, ເພັດ-ພອຍ ທີ່ມີຄ່າຫຼາຍເກີນຂອບເຂດໄປຮ່ວມງານ;

13. ຜູ້ປົກຄອງ ແລະ ແຂກທີ່ມາຮ່ວມງານ ປະປ່ອຍລູກຫຼານຕົນເອງເຂົ້າໄປລົບກວນສະຖານທີ່ເວທີຈັດງານ;

14. ຖືອາວຸດ, ວັດຖຸນິຄົມ, ສິ່ງເສບຕິດ, ສານເຄມີຕ່າງໆ, ຫຼິ້ນການພະນັນ, ໃຊ້ຄວາມຮຸນແຮງ, ດື່ມສິ່ງມຶນເມົາເກີນຂອບເຂດ, ກໍ່ກວນອາລະວາດຕີກັນ, ປະພຶດສິ່ງລາມົກອານາຈານ ແລະ ສ້າງຄວາມບໍ່ສະຫງົບໃນງານ;

15. ຈູດບັ້ງໄຟດອກ, ບັ້ງໄຟຫາງ, ໝາກກະໂພກ ແລະ ສິ່ງທີ່ມີສຽງດັງເນື່ອງນັນ ໂດຍທີ່ບໍ່ໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງເດັດຂາດ;

16. ຮ້ອງຄ່າສິນສອດ, ຄ່າສິນແຕ່ງ (ຄ່າດອງ) ຂອງເຈົ້າສາວແພງເກີນກົດໝາຍວ່າດ້ວຍຄອບຄົວ ແລະ ກົດໝາຍວ່າດ້ວຍທະບຽນຄອບຄົວ ກຳນົດໄວ້;

17. ຄົນລາວແຕ່ງດອງກັບຄົນຕ່າງປະເທດ ທີ່ບໍ່ໄດ້ຮັບອະນຸຍາດ ຈາກການຈັດຕັ້ງທີ່ກ່ຽວຂ້ອງ;

18. ແຫ່ໃພ້-ແຫ່ເຂີຍໃຫຍ່ໂຕ, ອວດອ້າງຖານະ, ຕຳແໜ່ງ ແລະ ນຳໃຊ້ພາຫະນະ ແຫ່ໄປຕາມຖະໜົນຫົນທາງ ເປັນຈຳນວນຫຼວງຫຼາຍ ກີດຂວາງການຈະລາຈອນ, ເປີດເພງດັງເກີນຂອບເຂດລົບກວນສັງຄົມ;

19. ບັງຄັບໃຫ້ນັກຮ້ອງ, ນັກເສບດົນຕີ ແລະ ມ່ວນຊື່ນ ກາຍໂມງເວລາທີ່ໄດ້ກຳນົດໄວ້ໃນມາດຕາ 17, 22, 24 ແລະ 30 ຂອງຂໍ້ຕົກລົງສະບັບນີ້;

20. ເອົາຮູບເຈົ້າບ່າວ, ເຈົ້າສາວ ໂຄສະນາໜ້າງານແຕ່ງດອງຫຼາຍເກີນຂອບເຂດ ແລະ ປະດັບປະດາໜ້າງານແຕ່ງດອງດ້ວຍດອກໄມ້ທີ່ຫຼູຫຼາເກີນໄປ;

21. ເສບດົນຕີ ໃນມື້ສູ່ຂໍເຈົ້າສາວ, ອຸ່ນດອງ ແລະ ລ້າງຜາມ;

22. ເອົາເຫຼົ້າ, ເບຍໄປມອບໃນເວທີງານຕ່າງໆ ຖ້າຈະມອບແມ່ນໃຫ້ມອບແບບສ່ວນຕົວ, ຄອບຄົວທາງນອກແລ້ວຈຶ່ງສັງລວມລາຍຊື່ອຸປະຖຳໃຫ້ເຈົ້າພາບ ຫຼື ແຈ້ງໂຄສົກປະກາດເທິງເວທີ;

23. ຈັດລອບລຳວົງ ບໍ່ໃຫ້ເວົ້າຕຳແໜ່ງພັກ-ຕຳແໜ່ງລັດ ແລະ ຈັດລຳວົງໃຫ້ເຈົ້າພາບ ແລະ ແຂກບໍ່ເກີນ 5 ຮອບ, ສ່ວນເຫຼືອນັ້ນແມ່ນມ່ວນຊື່ນຕາມອັດທະຍາໄສ;

24. ສຳລັບບຸນປະເພນີຂອງພີ່ນ້ອງເຜົ່າຫ້ໍ, ຊາວຈີນ, ຊາວຫວຽດນາມ ແລະ ບຸນປະເພນີອື່ນໆ ບໍ່ໃຫ້ຈູດໝາກກະໂພກ ທີ່ສົ່ງສຽງດັງເກີນຂອບເຂດ ທີ່ເປັນການສ້າງຄວາມບໍ່ສະຫງົບໃນສັງຄົມ ແລະ ເປັນມົນລະພິດຕໍ່ອາກາດໃຫ້ຈູດໄລຍະຊົ່ວໂມງສິ່ງທ້າຍປີເກົ່າ ແລະ ຕ້ອນຮັບປີ ໃໝ່ເວລາດຽວເທົ່ານັ້ນ;

25. ຈັດງານຢູ່ໃນສະຖານທີ່ວັດ, ຫ້າມເອົາສິ່ງມຶນເມົາ, ສິ່ງເສບຕິດ ເຂົ້າໄປບໍລິການເດັດຂາດ;

26. ຈັດງານດອງ ຫຼື ງານຕ່າງໆ ທີ່ມີການມ່ວນຊື່ນ ແລະ ດື່ມສິ່ງມຶນເມົາ ຢູ່ເດີ່ນໂຮງຮຽນ, ສຳນັກງານຂອງລັດ ໃນວັນລັດຖະການເດັດຂາດ;

27. ໂຍນຊໍ່ດອກໄມ້, ຕັດເຄັກ, ແລະ ອື່ນໆ ທີ່ຂັດກັບວັດທະນະທຳລາວ, ຮີດຄອງປະເພນີອັນດີງາມຂອງທ້ອງຖິ່ນ ໃຫ້ແກ່ຄູ່ບ່າວ-ສາວ, ເຈົ້າພາບ ຫຼື ແຂກທີ່ມາຮ່ວມໃນງານ;

28. ບໍ່ໃຫ້ເຮັດບັດເຊີນ ເຊີນແຂກທີ່ອາຍຸຕໍ່າກວ່າ 18 ປີ ເຂົ້າຮ່ວມງານແຕ່ງດອງ, ງານລ້ຽງ.

**ມາດຕາ 35 ສຳລັບງານສົບ ໃຫ້ປະຕິບັດດັ່ງນີ້:**

1. ມ່ວນຊື່ນ ແລະ ສົ່ງສຽງເປີດງັນເວລາອົບອຸ່ນງານສົບ;
2. ຫຼິ້ນການພະນັນເອົາເງິນເດັດຂາດ;
3. ຖືອາວຸດ, ສິ່ງເສບຕິດຜິດກົດໝາຍເຂົ້າໄປໃນງານສົບຢ່າງເດັດຂາດ;
4. ແຕ່ງຕົວ, ເວຍ້ອງເກີນຂອບເຂດ ໄປງານສົບເດັດຂາດ;
5. ຈູດ ຫຼື ຝັງສົບຊະຊາຍ ທີ່ບໍ່ໄດ້ຮັບອະນຸຍາດຈາກບ້ານ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງກຳນົດໄວ້;
6. ຖິ້ມຂີ້ເຫຍື້ອ, ເຄື່ອງຂອງຜູ້ເສຍຊີວິດຊະຊາຍ ຢູ່ອ້ອມບໍລິເວນບ່ອນຈູດ ຫຼື ຝັງສົບຂອງຜູ້ເສຍຊີວິດ;
7. ເອົາສົບ ໄວ້ເຮືອນດົນເປັນເວລາຫຼາຍວັນ ແລະ ບໍ່ໃຫ້ຄົບງັນສົບຜູ້ເສຍຊີວິດທີ່ຕິດພະຍາດຕິດແປດ;
8. ບັງຄັບຍາດພີ່ນ້ອງຂອງຜູ້ເສຍຊີວິດຂ້າສັດໃຫຍ່ເຮັດຮີດຄອງອົບອຸ່ນສົບຄົນຕາຍ ເກີນຄວາມສາມາດຂອງຄອບຄົວ.

## ໝວດທີ 8
## ອົງການຄຸ້ມຄອງ

**ມາດຕາ 36 ອົງການຄຸ້ມຄອງ**

**ກ. ອົງການຄຸ້ມຄອງຂັ້ນແຂວງ ປະກອບມີດັ່ງນີ້:**

1. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ;
2. ກອງບັນຊາການປ້ອງກັນຄວາມສະຫງົບແຂວງ;
3. ອົງການແນວລາວສ້າງຊາດແຂວງ;
4. ພະແນກພາຍໃນແຂວງ;
5. ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ;
6. ພະແນກສາທາລະນະສຸກແຂວງ;
7. ອົງການຂອງລັດທີ່ກ່ຽວຂ້ອງຂັ້ນແຂວງ.

**ຂ. ອົງການຄຸ້ມຄອງຂັ້ນເມືອງ ແລະ ຂັ້ນບ້ານ ປະກອບມີດັ່ງນີ້:**

1. ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ;
2. ກອງບັນຊາການປ້ອງກັນຄວາມສະຫງົບເມືອງ;
3. ອົງການແນວລາວສ້າງຊາດເມືອງ;
4. ຫ້ອງການພາຍໃນເມືອງ;
5. ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ;
6. ຫ້ອງການສາທາລະນະສຸກເມືອງ;
7. ອົງການຂອງລັດທີ່ກ່ຽວຂ້ອງຂັ້ນເມືອງ;
8. ອົງການປົກຄອງບ້ານ.

**ມາດຕາ 37 ສິດ ແລະ ໜ້າທີ່ການອົງການຄຸ້ມຄອງຂັ້ນແຂວງ**

**ກ. ສິດ ແລະ ໜ້າທີ່ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງມີດັ່ງນີ້:**

1. ເປັນເຈົ້າການໂຄສະນາ, ເຜີຍແຜ່ຂໍ້ຕົກລົງສະບັບນີ້ໃຫ້ປະຊາຊົນບັນດາເຜົ່າ, ການຈັດຕັ້ງທຸກພາກສ່ວນພາຍໃນແຂວງ ຮັບຮູ້ຢ່າງທົ່ວເຖິງ;
2. ຊຸກຍູ້, ຕິດຕາມ, ກວດກາ ການເຄື່ອນໄຫວຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນພາຍໃນແຂວງທີ່ຈັດງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ;

3. ກວດກາເນື້ອໃນງານບຸນ, ບັນດາກິດຈະກຳທີ່ສະເໜີການຈັດງານບຸນປະເພນີຕ່າງໆ ຂອງອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມຂັ້ນແຂວງ, ຂັ້ນເມືອງ;

4. ສຶກສາອົບຮົມ, ກ່າວເຕືອນບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນທີ່ຝ່າຝືນລະເມີດບໍ່ປະຕິບັດຕາມເນື້ອໃນຂໍ້ຕົກລົງສະບັບນີ້;

5. ສົມທົບກັບຜູ້ຈັດງານປະເພດຕ່າງໆ, ອົງການກວດກາພາຍໃນ, ພາຍນອກ ແກ້ໄຂໃນກໍລະນີເກີດມີບັນຫາໃດບັນຫາໜຶ່ງເກີດຂຶ້ນໃຫ້ທັນເວລາ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ຂ. ສິດ ແລະ ໜ້າທີ່ຂອງກອງບັນຊາການປ້ອງກັນຄວາມສະຫງົບແຂວງ ມີດັ່ງນີ້:**

1. ຮັກສາຄວາມສະຫງົບທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍເສດຖະກິດ-ສັງຄົມ;

2. ຊີ້ນຳ, ຄຸ້ມຄອງ, ກວດກາ ແລະ ຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມສະຫງົບໃນທົ່ວສັງຄົມ;

3. ສຶກສາອົບຮົມປະຊາຊົນບັນດາເຜົ່າ ໃຫ້ເຊື່ອມຊຶມຂໍ້ຕົກລົງສະບັບນີ້ ໃຫ້ສອດຄ່ອງກັບແນວທາງປ້ອງກັນຄວາມສະຫງົບ ທົ່ວປວງຊົນ, ເຄົາລົບ ແລະ ປະຕິບັດກົດລະບຽບຢ່າງເຂັ້ມງວດ;

4. ຈັດຕັ້ງກຳລັງອອກເຄື່ອນໄຫວ, ຕິດຕາມ, ກວດກາ, ຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຕາມງານບຸນຕ່າງໆ;

5. ປະສານສົມທົບກັບພາກສ່ວນຕ່າງໆ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ ໃນງານບຸນປະເພນີຕ່າງໆ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ຄ. ສິດ ແລະ ໜ້າທີ່ຂອງອົງການແນວລາວສ້າງຊາດແຂວງ ມີດັ່ງນີ້:**

1. ເສີມຂະຫຍາຍສິດເປັນເຈົ້າ, ປົກປັກຮັກສາວັດທະນະທຳ, ຮີດຄອງປະເພນີອັນດີງາມ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນບັນດາເຜົ່າ, ຊັ້ນຄົນ ແລະ ສາສະໜາຕ່າງໆ;

2. ໂຄສະນາ, ສຶກສາອົບຮົມ, ປຸກລະດົມ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນບັນດາເຜົ່າ ໃນການປະຕິບັດແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ໃນແຕ່ລະໄລຍະ;

3. ເກັບກຳ ແລະ ສັງລວມຄຳຄິດ, ຄຳເຫັນ, ຄຳສະເໜີຂອງສັງຄົມ, ທຸກຊັ້ນຄົນ, ສາສະໜາ, ເພດໄວ ເພື່ອສະເໜີຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງຕາມກົດໝາຍ ແລະ ລະບຽບການ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ງ. ສິດ ແລະ ໜ້າທີ່ ຂອງພະແນກພາຍໃນແຂວງ ມີດັ່ງນີ້:**

1. ຊຸກຍູ້, ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນພາຍໃນແຂວງ ໃນການຈັດຕັ້ງປະຕິບັດບຸນປະເພນີຕ່າງໆ;

2. ຄົ້ນຄວ້າ, ມີຄຳເຫັນຕໍ່ການສະເໜີຈັດບຸນປະເພນີຕ່າງໆ ຂອງອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມຂັ້ນແຂວງ, ຂັ້ນເມືອງ;

3. ປະສານສົບທົບກັບຂະແໜງການຕ່າງໆ ໃນການຈັດງານບຸນປະເພນີ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ຈ. ສິດ ແລະ ໜ້າທີ່ ຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ມີດັ່ງນີ້:**

1. ມີໜ້າທີ່ປະສານສົມທົບກັບພະແນກສາທາລະນະສຸກ ແລະ ເຈົ້າໜ້າທີ່ຕຳຫຼວດແຂວງ ເປັນເຈົ້າການອຳນວຍຄວາມສະດວກ ແລະ ຊ່ວຍເຫຼືອເອົາບຸກຄົນທີ່ເສຍຊີວິດທີ່ບໍ່ມີຍາດຕິພີ່ນ້ອງ, ຄົນເລັ້ລ່ອນ, ໄບ້ບ້າເສຍຈິດໄປສົ່ງສະການຕາມເງື່ອນໄຂຄວາມເປັນຈິງ ເພື່ອຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

2. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ສ. ສິດ ແລະ ໜ້າທີ່ ຂອງພະແນກສາທາລະນະສຸກແຂວງ ມີດັ່ງນີ້:**

1. ເປັນເຈົ້າການຄົ້ນຄວ້າກຳນົດນະໂຍບາຍ ແລະ ແຜນການຄຸ້ມຄອງຄວາມປອດໄພທາງດ້ານອາຫານ;

2. ພົວພັນປະສານສົມທົບ ແລະ ໃຫ້ຄຳປຶກສາແກ່ບັນດາຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານສຸຂະສຶກສາດ້ານອາຫານ ແລະ ເຄື່ອງດື່ມ;

3. ຄຸ້ມຄອງ, ຕິດຕາມກວດກາຄຸນນະພາບຄວາມປອດໄພຂອງອາຫານ, ເຄື່ອງດື່ມ ແລະ ການຫຸ້ມຫໍ່ຕ່າງໆ;

4. ຮັບຜິດຊອບປະສານສົມທົບກັບພະແນກແຮງງານ ແລະ ສະຫວັດດີການສັງຄົມ ໃນການຫຸ້ມຫໍ່ສົບທີ່ຕິດພະຍາດ, ເກັບຮັກສາສາກສົບຄົນເລລ້ອນ, ໄບ້ບ້າເສຍຈິດ, ຄົນດ້ອຍໂອກາດເພື່ອກະກຽມສິ່ງສະການ;

5. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 38 ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງຂັ້ນເມືອງ**

**ກ. ສິດ ແລະ ໜ້າທີ່ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ ມີດັ່ງນີ້:**

1. ເປັນເຈົ້າການໂຄສະນາ, ເຜີຍແຜ່ຂໍ້ຕົກລົງສະບັບນີ້ໃຫ້ປະຊາຊົນບັນດາເຜົ່າ, ການຈັດຕັ້ງທຸກພາກສ່ວນພາຍໃນເມືອງຂອງຕົນຮັບຮູ້ຢ່າງທົ່ວເຖິງ;

2. ຊຸກຍູ້, ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນພາຍໃນເມືອງຂອງຕົນທີ່ຈັດງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ;

3. ກວດກາເນື້ອໃນ, ກິດຈະກຳທີ່ສະເໜີຈັດງານບຸນປະເພນີຕ່າງໆ ຂອງອົງການຈັດຕັ້ງລັດ, ອົງການຈັດຕັ້ງ ສັງຄົມ, ບ້ານ, ກຸ່ມບ້ານ ພາຍໃນຂອບເຂດເມືອງຂອງຕົນ;

4. ສຶກສາອົບຮົມ ແລະ ກ່າວເຕືອນບັນດາບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນພາຍໃນເມືອງທີ່ມີການລະເມີດບໍ່ປະຕິບັດຕາມຂໍ້ຕົກລົງສະບັບນີ້;

5. ສົມທົບກັບຜູ້ຈັດງານປະເພດຕ່າງໆ, ອົງການກວດກາພາຍໃນ ແລະ ພາຍນອກ ແກ້ໄຂໃນກໍລະນີເກີດມີບັນຫາໃດໜຶ່ງທີ່ເກີດຂຶ້ນໃຫ້ທັນເວລາ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ຂ. ສິດ ແລະ ໜ້າທີ່ຂອງກອງບັນຊາການປ້ອງກັນຄວາມສະຫງົບເມືອງ ມີດັ່ງນີ້:**

1. ຮັກສາຄວາມສະຫງົບທາງດ້ານການເມືອງ, ເສດຖະກິດ-ສັງຄົມພາຍໃນເມືອງຂອງຕົນ;

2. ຊີ້ນຳ, ຄຸ້ມຄອງ, ກວດກາ ແລະ ຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມສະຫງົບໃນທົ່ວສັງຄົມ;

3. ສຶກສາອົບຮົມປະຊາຊົນບັນດາເຜົ່າ ພາຍໃນເມືອງ ໃຫ້ເຊື່ອມຊຶມແນວທາງປ້ອງກັນຄວາມສະຫງົບທົ່ວປວງຊົນ, ເຄົາລົບ ແລະ ປະຕິບັດກົດລະບຽບຈະລາຈອນຢ່າງເຂັ້ມງວດ;

4. ຈັດຕັ້ງກຳລັງອອກເຄື່ອນໄຫວ, ກວດກາລາດຕະເວນ, ຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຕາມບຸນງານຕ່າງໆ ຂອບເຂດເມືອງຂອງຕົນ;

5. ປະສານສົມທົບກັບອົງການປົກຄອງບ້ານ, ພາກສ່ວນຕ່າງໆ ທີ່ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ, ປະຕິບັດການປັບໃໝ ແລະ ລົງໂທດຜູ້ລະເມີດ ຕາມຂໍ້ຕົກລົງສະບັບນີ້;

6. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ຄ. ສິດ ແລະ ໜ້າທີ່ຂອງອົງການແນວລາວສ້າງຊາດເມືອງ ມີດັ່ງນີ້:**

1. ເສີມຂະຫຍາຍສິດເປັນເຈົ້າ, ປົກປັກຮັກສາວັດທະນະທຳ, ຮີດຄອງປະເພນີອັນດີງາມ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ ຢູ່ພາຍໃນເມືອງຂອງຕົນ;

2. ໂຄສະນາ, ສຶກສາອົບຮົມ, ປຸກລະດົມ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນບັນດາເຜົ່າໃນການປະຕິບັດແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງໃນແຕ່ລະໄລຍະ;

3. ເກັບກຳຄຳຄິດ, ຄຳເຫັນ, ຄຳສະເໜີ ຂອງປະຊາຊົນລາວບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເພດ, ໄວ ເພື່ອສະເໜີຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ງ. ສິດ ແລະ ໜ້າທີ່ ຂອງຫ້ອງການພາຍໃນເມືອງ ມີດັ່ງນີ້:

1. ຊຸກຍູ້, ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນພາຍໃນແຂວງໃນການຈັດຕັ້ງປະຕິບັດບຸນປະເພນີຕ່າງໆ;

2. ຄົ້ນຄວ້າ, ມີຄໍາເຫັນຕໍ່ການສະເໜີຈັດງານບຸນປະເພນີຕ່າງໆຂອງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມຢູ່ພາຍໃນແຂວງ, ເມືອງ ແລະ ບ້ານຂອງຕົນ;

3. ປະສານສົມທົບກັບຂະແໜງການຕ່າງໆ ໃນການຈັດງານບຸນປະເພນີຢູ່ຂອບເຂດພາຍໃນເມືອງ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

ຈ. ສິດ ແລະ ໜ້າທີ່ຂອງຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ມີດັ່ງນີ້:

1. ປະສານສົມທົບກັບຫ້ອງການສາທາລະນະສຸກເມືອງ ແລະ ເຈົ້າໜ້າທີ່ຕໍາຫຼວດເມືອງ ເປັນເຈົ້າການອໍານວຍສະດວກ ແລະ ຊ່ວຍເຫຼືອເອົາບຸກຄົນທີ່ເສຍຊີວິດ ບໍ່ມີຍາດພີ່ນ້ອງ, ຄົນເລ້ລ້ອນ, ໄບ້ບ້າເສຍຈິດໄປສົ່ງສະການຕາມເງື່ອນໄຂຄວາມເປັນຈິງ ເພື່ອຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

2. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

ສ. ສິດ ແລະ ໜ້າທີ່ ຂອງຫ້ອງການສາທາລະນະສຸກເມືອງ ມີດັ່ງນີ້:

1. ພົວພັນປະສານສົມທົບ ແລະ ໃຫ້ຄໍາປຶກສາແກ່ບັນດາຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງວຽກງານສຸຂະສຶກສາດ້ານອາຫານ ແລະ ເຄື່ອງດື່ມ;

2. ຄຸ້ມຄອງ, ຕິດຕາມກວດກາຄຸນນະພາບຄວາມປອດໄພຂອງອາຫານ, ເຄື່ອງດື່ມ ແລະ ການຫຸ້ມຫໍ່ຕ່າງໆ;

3. ຮັບຜິດຊອບ ໃນການຫຸ້ມຫໍ່ສົບທີ່ຕິດພະຍາດ, ເກັບຮັກສາຊາກສົບຄົນເລລ້ອນ, ໄບ້, ບ້າ, ເສຍຈິດ, ຄົນດ້ອຍໂອກາດເພື່ອກະກຽມສົ່ງສະການ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

ຊ. ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານມີດັ່ງນີ້:

1. ເປັນເຈົ້າການໂຄສະນາເຜີຍແຜ່ເນື້ອໃນຂໍ້ຕົກລົງສະບັບນີ້ ໃຫ້ປະຊາຊົນບັນດາເຜົ່າ ພາຍໃນບ້ານຂອງຕົນ ໃຫ້ຮັບຮູ້, ເຂົ້າໃຈຢ່າງທົ່ວເຖິງ ແລະ ນໍາພາປະຕິບັດໃຫ້ມີປະສິດທິຜົນ;

2. ຊຸກຍູ້, ຕິດຕາມ, ກວດກາ ການຈັດງານດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆຂອງບັນດາຄອບຄົວພາຍໃນບ້ານຂອງຕົນໃຫ້ເປັນປົກກະຕິ ເມື່ອກວດກາພົບເຫັນບັນຫາ ຮີບແກ້ໄຂໃຫ້ທັນສະພາບການ ພ້ອມທັງລາຍງານໃຫ້ຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ, ເມືອງ ຮັບຊາບ ໃຫ້ທັນເວລາ.

3. ຖ້າບ້ານແກ້ໄຂບໍ່ໄດ້ ຮີບຮ້ອນລາຍງານໃຫ້ຂະແໜງການກ່ຽວຂ້ອງຂັ້ນເມືອງ ລົງແກ້ໄຂຊ່ວຍຕາມຂັ້ນຕອນ, ປະຕິບັດສິດໜ້າທີ່ອື່ນຕາມສິດ ແລະ ພາລະບົດບາດຂອງບ້ານຢ່າງເຂັ້ມງວດ.

## ໝວດທີ 9
## ອົງການກວດກາ

**ມາດຕາ 39 ອົງການກວດກາພາຍໃນ**

ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງ ການຈັດງານປະເພນີຕ່າງໆ ຢູ່ແຂວງອຸດົມໄຊ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 37 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 40 ອົງການກວດກາພາຍນອກ**

ອົງການກວດກາພາຍນອກປະກອບມີຄື:

1. ສະພາປະຊາຊົນແຂວງ;
2. ອົງການກວດກາລັດແຂວງ, ອົງການກວດກາລັດເມືອງ;
3. ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

## ໝວດທີ 10
## ການຍ້ອງຍໍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 41 ການຍ້ອງຍໍຕໍ່ຜູ້ທີ່ມີຜົນງານ**

ລັດຊຸກຍູ້, ສົ່ງເສີມ ແລະ ຍ້ອງຍໍ ບຸກຄົນ, ອົງການຈັດຕັ້ງລັດ ແລະ ອົງການຈັດຕັ້ງສັງຄົມ ທຸກພາກສ່ວນທີ່ມີຜົນງານດີເດັ່ນໃນການປະກອບສ່ວນ ແລະ ເປັນແບບຢ່າງໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ.

**ມາດຕາ 42 ມາດຕະການຕໍ່ຜູ້ລະເມີດ**

ມາດຕະການຕໍ່ຜູ້ລະເມີດ ແມ່ນບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງລັດ ແລະ ອົງການຈັດຕັ້ງສັງຄົມ ຫາກລະເມີດຂໍ້ຫ້າມຕ່າງໆ ຂອງຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ ແລະ ປັບໃໝຕາມຂັ້ນຕອນ, ໂດຍມອບໃຫ້ບ້ານເປັນຜູ້ຕິດຕາມກວດກາ, ສຶກສາອົບຮົມ, ສ້າງບົດບັນທຶກ, ປັບໃໝຜູ້ກະທຳຜິດ ພ້ອມທັງລາຍງານໃຫ້ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຢ່າງທັນການ ຫຼື ຮ້າຍໄປກວ່ານັ້ນ ແມ່ນຈະຖືກປະຕິບັດຕາມລະບຽບກົດໝາຍ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 43 ການຈັດຕັ້ງປະຕິບັດ**

ການຈັດຕັ້ງປະຕິບັດມອບໃຫ້ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງບ້ານ ເປັນໃຈກາງໃນການ ຈັດຕັ້ງຜັນຂະຫຍາຍ, ເຜີຍແຜ່ຂໍ້ຕົກລົງສະບັບນີ້ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນຢ່າງທົ່ວເຖິງ ແລະ ເຮັດໜ້າທີ່ຕິດຕາມ, ກວດກາ ແລະ ປະເມີນຜົນ, ຖອດຖອນບົດຮຽນ ກ່ຽວກັບເນື້ອໃນຂອງຂໍ້ຕົກລົງສະບັບນີ້ ໂດຍຖືວ່າເປັນມາດຕະຖານໜຶ່ງໃນການສ້າງຄົນ, ຄອບຄົວ, ບ້ານ ແລະ ກຸ່ມກອງວັດທະນະທຳ, ຄອບຄົວ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ ຕ້ອງເຄົາລົບ, ປະຕິບັດຂໍ້ຕົກລົງສະບັບນີ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນຢ່າງເຂັ້ມງວດ.

**ມາດຕາ 44 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນເປັນຕົ້ນໄປ.

**ເຈົ້າແຂວງ**

ບຸນຕົວ ຫຼ້າຈຽມພອນ